**ສັນຍາ**

**ວ່າດ້ວຍການຮ່ວມມືບູລະນະ ແລະ ປົກປັກຮັກສາສຸສານລະນຶກເຖິງວິລະກຳຈີນຢູ່ ສປປ ລາວ**

**ລະຫວ່າງ**

**ລັດຖະບານ ແຫ່ງ ສາທາລະນະລັດ ປະຊາຊົນຈີນ**

**ແລະ**

**ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາຊົນຈີນ ແລະ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຊຶ່ງຕໍ່ໄປເອີ້ນວ່າ "ສອງຝ່າຍ" ຮັບຮູ້ວ່າ ໃນໄລຍະຊຸມປີ 60 ຫາ 70 ຂອງສັດຕະວັດທີ 20 ໄດ້ມີວິລະກຳຈຳນວນຫລາຍຂອງ ສປ ຈີນ ທີ່ສະໜັບສະໜູນພາລະກິດ ເອກະລາດ ແລະ ປົດປ່ອຍຂອງ ສປປ ລາວ ໄດ້ເສັຍສະຫລະຊີວິດໃນດິນແດນ ສປປ ລາວ. ປະຈຸບັນນີ້ ໄດ້ຝັງຢູ່ສຸສານຈີນ 03 ແຫ່ງ ຄື: ເມືອງໄຊ ແລະ ເມືອງນາໝໍ້ ແຂວງອຸດົມໄຊ ແລະ ເມືອງແປກ ແຂວງຊຽງຂວາງ.

ສອງຝ່າຍ ເຫັນດີຮ່ວມມືບູລະນະ ແລະ ປົກປັກຮັກສາສຸສານລະນຶກເຖິງວິລະກຳຈີນຢູ່ລາວ ຊຶ່ງມີຄວາມໝາຍສຳຄັນຕໍ່ການຮັກສາສາຍພົວພັນມິດຕະພາບ ລະຫວ່າງສອງປະເທດ.

ໂດຍປຶກສາຫາລືດ້ວຍໄມຕີຈິດມິດຕະພາບ ກ່ຽວກັບວຽກງານຮ່ວມມືບູລະນະ ແລະ ປົກປັກຮັກສາສຸສານລະນຶກເຖິງວິລະກຳຈີນຢູ່ ສປປ ລາວ, ສອງຝ່າຍໄດ້ຕົກລົງກັນ ດັ່ງລຸ່ມນີ້:

**ມາດຕາ 1**

ໂດຍອີງຕາມຫຼັກການສ້ອມແປງຢູ່ສະຖານທີ່ເດີມ ແລະ ຂະຫຍາຍເນື້ອທີ່ ຕາມທີ່ໄດ້ຕົກລົງກັນ ແລະ ອີງຕາມແຜນການບູລະນະທີ່ສອງຝ່າຍຕົກລົງກັນ ໃນການບູລະນະສຸສານຈີນ 3 ແຫ່ງ ຄື: ເມືອງໄຊ ແລະ ເມືອງນາໝໍ້ ແຂວງອຸດົມໄຊ ແລະ ເມືອງແປກ ແຂວງຊຽງຂວາງ.

**ມາດຕາ 2**

ການຂະຫຍາຍເນື້ອທີ່ດິນບູລະນະສຸສານຈີນ ຢູ່ 03 ແຫ່ງ ໄດ້ມີການຕົກລົງ ດັ່ງລຸ່ມນີ້:

(1) ສຸສານຈີນ ຢູ່ບ້ານທ້ຽວ, ເມືອງໄຊ, ແຂວງອຸດົມໄຊ: ຈາກເນື້ອທີ່ເກົ່າ 5,829 ຕາແມັດ ເພີ່ມຕື່ມ 4,409.7 ຕາແມັດ, ລວມເນື້ອທັງໝົດ 10,238.7 ຕາແມັດ.

(2) ສຸສານຈີນ ຢູ່ບ້ານນ້ຳແຊ, ເມືອງນາໝໍ້, ແຂວງອຸດົມໄຊ: ຈາກເນື້ອທີ່ເກົ່າ 3,248 ຕາແມັດ ເພີ່ມຕື່ມ464 ຕາແມັດ, ລວມເນື້ອທັງໝົດ3,712 ຕາແມັດ.

(3) ສຸສານຈີນ ຢູ່ບ້ານໂພນສະຫວັນເໜືອ, ເມືອງແປກ, ແຂວງຊຽງຂວາງ: ຈາກເນື້ອທີ່ເກົ່າ 913.6 ຕາແມັດ ເພີ່ມຕື່ມ 2,561.15 ຕາແມັດ, ລວມເນື້ອທັງໝົດ 3,474.75 ຕາແມັດ.

**ມາດຕາ 3**

ຝ່າຍລາວ ຮັບຜິດຊອບຈ່າຍຄ່າຊົດເຊີຍຜົນເສຍຫາຍ ທາງດ້ານເນື້ອທີ່, ສິ່ງກໍ່ສ້າງ, ພືນລະປູກຂອງປະຊາຊົນ ແລະ ຄ່າໃຊ້ຈ່າຍເຮັດຮົດຄອງ ທີ່ເກີດຂຶ້ນຈາກການຂະຫຍາຍເນື້ອທີ່ສຸສານ ຢູ່ 3 ແຫ່ງ ແລະ ສົມທົບພາກ

ສ່ວນກ່ຽວຂ້ອງໃນການໄກ່ເກ່ຍ ເພື່ອໃຫ້ຝ່າຍຈີນສາມາດເລີ່ມລົງມືການບູລະນະສຸສານຈີນ ພາຍໃນເດືອນຕຸລາ ປີ 2016.

ຝ່າຍຈີນ ຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ ຂອງວຽກງານປັບປຸງບູລະນະສຸສານ ຢູ່ 03 ແຫ່ງ ແລະ ໃຫ້ສໍາເລັດການບູລະນະສຸສານ ໃນເດືອນມີນາ 2017.

ສອງຝ່າຍ ຈະພ້ອມກັນຈັດພິທີສໍາເລັດໂຄງການ ໃນວັນສ້າງຕັ້ງສາຍພົວພັນການທູດລາວ-ຈີນ ປີ2017.

**ມາດຕາ 4**

ປ້າຍຊື່ຢູ່ທາງດ້ານໜ້າປະຕູ ແລະ ໜັງສືໃນສີລາຈາລຶກຂອງສຸສານ ຈະຂຽນເປັນສອງພາສາ, ພາສາ ລາວ ແລະ ພາສາຈີນ, ພາສາລາວ ຢູ່ກ້ຳຂວາ ພາສາຈີນຢູ່ກ້ຳຊ້າຍ. ຮູບພາບໃນຝາພະໜັງສະຫລັກຂອງສຸສານ ຕ້ອງສ່ອງແສງໃຫ້ເຫັນເຖິງສະພາບຕົວຈິງທີ່ຝ່າຍຈີນຊ່ວຍເຫລືອລາວໃນເມື່ອກ່ອນ.

ຝ່າຍຈີນ ຈະຈັດເນື້ອໃນປ້າຍຊື່ທາງໜ້າປະຕູ, ໜັງສືໃນສີລາຈາລຶກ ແລະ ແຜນຜັງການອອກແບບອັນລະອຽດ ຂອງຝາພະໜັງສະຫຼັກຂອງສຸສານ ໃຫ້ຝ່າຍລາວໂດຍໄວ. ຝ່າຍລາວ ຈະຮີບຮ້ອນແຈ້ງ ໃນເວລາອັນຄວນ.

**ມາດຕາ 5**

ສອງຝ່າຍ ຈະຮ່ວມມືໃນການຊອກຫາຫຼຸມຝັງສົບ ແລະ ຊາກສົບ ຂອງວິລະກໍາຈີນ ຕາມເສັ້ນທາງທີ່ນັກວິສະວະກອນຈີນຊ່ວຍສ້າງທາງໃຫ້ຝ່າຍລາວໃນເມື່ອກ່ອນ ບົນພື້ນຖານການສະໜອງດ້ານຂໍ້ມູນຂອງຝ່າຍຈີນກ່ຽວກັບລາຍຊື່, ຈໍານວນຊາກສົບທີ່ຍັງຕົກຄ້າງ ແລະ ຈຸດພິກັດທີ່ຝັງຊາກສົບໃນເມື່ອກ່ອນ. ຫລັງຈາກທີ່ສອງຝ່າຍ ພ້ອມກັນຢັ້ງຢືນແລ້ວ ຝ່າຍຈີນຈະຮັບຜິດຊອບຄ່າໃຊ້ຈ່າຍຂອງການຍ້າຍອັດຖິເຂົ້າສຸສານ ວິລະກໍາ.

**ມາດຕາ 6**

ໃນຂະບວນການບູລະນະສຸສານ ແລະ ການຍົກຍ້າຍຫລຸມຝັງສົບ ທີ່ລະນຶກເຖິງວິລະກໍາຈີນ, ຝ່າຍລາວ ຈະອໍານວຍຄວາມສະດວກ ດ້ານນ້ຳປະປາ, ໄຟຟ້າ, ປ້ອງກັນຄວາມ ປອດໄພ ແລະ ອື່ນໆທີ່ກ່ຽວຂ້ອງ, ແລະ ຍົກເວັ້ນພາສີອາກອນນໍາເຂົ້າວັດຖຸອຸປະກອນ ຮັບໃຊ້ການບູລະນະສຸສານວິລະກໍາຂອງຝ່າຍຈີນ ແລະ ເຄື່ອງຮັບໃຊ້ໃນຊີວິດປະຈໍາວັນ ທີ່ຈໍາເປັນຂອງວິຊາກອນດ້ານວິສະວະກໍາ ແລະ ເຕັກນິກ ຂອງຝ່າຍຈີນ.

**ມາດຕາ 7**

ເພື່ອເປັນການກະກຽມການສ້າງຫ້ອງສະແດງວິລະກໍາພາຍໃນສຸສານ, ສອງຝ່າຍຈະຮ່ວມກັນຊອກຄົ້ນເອກະສານ ຫລັກຖານ ແລະ ອະນຸສອນ ຂອງການຊ່ວຍເຫລືອລາວໃນປະຫວັດສາດ ເພື່ອສະທ້ອນໃຫ້ເຫັນເຖິງປະຫວັດສາດຕົວຈິງ, ເປັນການສະແດງເຖິງມິດຕະພາບການຮ່ວມມື ຂອງປະຊາຊົນ ສອງຊາດ ລາວ-ຈີນ ໃນໄລຍະຜ່ານມາ. ຝ່າຍຈີນ ຈະຈັດສົ່ງຮູບແບບເນື້ອໃນຂອງຫ້ອງສະແດງໃຫ້ຝ່າຍລາວໂດຍໄວ. ຝ່າຍລາວ ຈະຮີບ ຮ້ອນແຈ້ງໃນເວລາອັນຄວນ.

**ມາດຕາ 8**

ພາຍຫລັງການບູລະນະສຸສານສໍາເລັດ, ຝ່າຍລາວ ຮັບຜິດຊອບວຽກງານການຄຸ້ມຄອງປະຈໍາວັນ, ອະນາໄມ, ປ້ອງກັນຄວາມປອດໄພ, ໄຟຟ້າ, ນ້ຳປະປາ ແລະ ອື່ນໆທີ່ກ່ຽວຂ້ອງ ລວມທັງພື້ນທີ່ສີຂຽວ; ຝ່າຍຈີນ ຮັບຜິດຊອບຄ່າໃຊ້ຈ່າຍ ພາຍຫລັງສອງຝ່າຍໄດ້ປຶກສາຫາລື ແລະ ເຫັນດີນໍາກັນ ກ່ຽວກັບຄ່າໃຊ້ຈ່າຍທີ່ຈໍາເປັນນັ້ນ.

**ມາດຕາ 9**

ຝ່າຍລາວ ອຳນວຍຄວາມສະດວກໃນການພິຈາລະນາຂໍວີຊາເຂົ້າ-ອອກ ສປປ ລາວ ແລະ ເຮັດໜັງສືອະນຸຍາດເຮັດວຽກໃຫ້ວິຊາການດ້ານວິສະວະກຳ ແລະ ເຕັກນິກຂອງຝ່າຍຈີນ ທີ່ເຂົ້າມາປະຕິບັດໜ້າທີ່ຕາມແຜນການບູລະນະ ແລະ ປົກປັກຮັກສາສຸສານຈີນຢູ່ ສປປ ລາວ ຕາມການຕົກລົງຂອງຝ່າຍຈີນ.

**ມາດຕາ 10**

ສອງຝ່າຍ ຈະປຶກສາຫາລື ແລະ ປະສານສົມທົບກັນ ໂດຍຜ່ານຊ່ອງທາງການທູດ ເພື່ອແກ້ໄຂບັນຫາຕ່າງໆ ໃຫ້ໄດ້ດີໃນວຽກງານບູລະນະ ແລະ ປົກປັກຮັກສາສຸສານລະນຶກເຖິງວິລະກຳຈີນຢູ່ ລາວ.

**ມາດຕາ 11**

ຂໍ້ຂັດແຍ່ງທີ່ເກີດຂຶ້ນໃນ ລະຫວ່າງການຈັດຕັ້ງປະຕິບັດສັນຍາ ສະບັບນີ້ ຈະຖືກແກ້ໄຂໂດຍການປຶກສາຫາລື ແລະ ເຈລະຈາກັນ ດ້ວຍມິດຕະພາບ ລະຫວ່າງສອງຝ່າຍ.

**ມາດຕາ 12**

ກໍລະນີຈະປັບປຸງເນື້ອໃນຂອງສັນຍາສະບັບນີ້ ສອງຝ່າຍຕ້ອງໄດ້ມີການປຶກສາຫາລື ເອກະພາບຮ່ວມກັນ ແລະ ແຈ້ງໃຫ້ກັນຊາບໂດຍຜ່ານຊ່ອງທາງການທູດ.

**ມາດຕາ 13**

ສັນຍາສະບັບນີ້ ມີຜົນບັງຄັບໃຊ້ ນັບແຕ່ວັນລົງລາຍເຊັນ ແລະ ຈະສືບຕໍ່ມີຜົນບັງຄັບໃຊ້ຈົນກ່ວາຝ່າຍໃດຝ່າຍໜຶ່ງຈະແຈ້ງຈຸດປະສົງຂອງຕົນໃນການຢຸດເຊົາສັນຍາ ຢ່າງເປັນລາຍລັກອັກສອນ ໂດຍຜ່ານຊ່ອງທາງການທູດ ກ່ອນລ່ວງໜ້າ 6 ເດືອນ.

ການຢຸດເຊົາສັນຍາສະບັບນີ້ ຈະບໍ່ກະທົບກະເທືອນຕໍ່ການຕົກລົງ ຫຼື ພັນທະອື່ນ ທີ່ສອງຝ່າຍໄດ້ຕົກລົງກັນແລ້ວ.

ເພື່ອເປັນສັກຂີພິຍານ, ຜູ້ລົງນາມຢູ່ຂ້າງລຸ່ມ ຊຶ່ງໄດ້ຮັບສິດອຳນາດຢ່າງຖືກຕ້ອງ ຈາກແຕ່ລະລັດຖະບານຂອງຕົນ ຈຶ່ງໄດ້ລົງນາມໃນສັນຍາສະບັບນີ້.

ເຮັດທີ່ ນະຄອນຫລວງວຽງຈັນ, ເມື່ອວັນທີ 08 ກັນຍາ 2016, ເປັນສອງຕົ້ນສະບັບ, ພາສາລາວ ແລະ ພາສາຈີນ ທັງສອງສະບັບມີຄຸນຄ່າເທົ່າທຽມກັນ.

**ຕາງໜ້າ ລັດຖະບານ ແຫ່ງ ສປ ຈີນ**

ໂຕ່ ຢຸ ເຜ່

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**

ໃບຄຳ ຂັດທິຍະ